**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງການຕ່າງປະເທດ
ຫ້ອງການ

ເລກທີ: 232 /ຫກ
14 FEB 2024
ນະຄອນຫຼວງວຽງຈັນ, ວັນທີ : .................

# ຫນັງສືແຈ້ງເຊີນປະມູນ

1. ກະຊວງການຕ່າງປະເທດ ຂໍເຊີນບັນດາ ອູ່ / ບໍລິສັດ ທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບສະຫນອງ ***ການສ້ອມແປງພາຫະນະລົດ ຂອງ ກະຊວງການຕ່າງປະເທດ ປະຈໍານະຄອນຫຼວງວຽງຈັນ ແລະ ແຂວງ ຈໍາປາສັກ ປະຈໍາປີ 2024.***
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກ້ວາງທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ອູ່/ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ.
4. ເອກະສານປະມູນຄົບຊຸດທີ່ເປັນພາສາລາວສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈໂດຍການຍື່ນຫນັງສືສະເຫນີຫາທີ່ຢູ່ຂ້າງລຸ່ມນີ້ (7), ເລີ່ມແຕ່ວັນທີ ***15/02/2024 – 21/03/2024*** ເປັນຕົ້ນໄປ, ໃນລາຄາ **500.000** ກີບ , ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນ ***ເງິນສົດ.***
5. ຊອງປະມູນຕ້ອງສົ່ງຕາມສະຖານທີ່ດັ່ງລຸ່ມນີ້ (7), ໃນ ***ເວລາ 13:30 ໂມງ, ວັນທີ 26/03/2024 .*** ສໍາລັບຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ ***ເວລາ 14:00ໂມງ, ວັນທີ 26/03/2024 ແລະ ຫ້ອງປະຊຸມ ຊັ້ນ III ຕຶກ B*** ໂດຍຊ່ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ຫນັງສືຄໍ້າປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງ ລາຄາປະມູນມາພ້ອມ.
7. ທີ່ຢູ່ຕາມທີ່ລະບຸໄວ້ຢູ່ຂ້າງເທິງແມ່ນ:
   *ພະແນກບໍລິຫານ, ຫ້ອງການ, ກະຊວງການຕ່າງປະເທດ*
   *ຖະໜົນ 23 ສິງຫາ, ບ້ານ ໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ*
   *ໂທລະສັບ: 021 416572.*

**ຫົວໜ້າຫ້ອງການ**

ຫ້ອງການ

ອອນຄໍາ ເຈື່ອງມະນີວົງ